# ການໄດ້ຮັບພິດຈາກໄຮໂດຣເຈັນຊັນໄຟດ໌ ໃນລະຫວ່າງການເຮັດວຽກສ້ອມແປງບໍ່ເກັບຂອງເສຍ

## 집수조 수리작업 중 황화수소에 중독

2018-교육미디어-364

### ⚠ ກໍລະນີອຸປະຕິເຫດ 재해사례



ຜູ້ເຄາະຮ້າຍພະຍາຍາມລ້າງທໍ່ອຸດຕັນທີ່ເຊື່ອມຕໍ່ຄອກໝູກັບບໍ່ເກັບຂອງເສຍໃນຟາມໝູຂອງລາວ ໂດຍໃຊ້ໄມ້ທົ່ງ ແລະ ໄມ້ທົ່ງຕົກລົງໄປໃນບໍ່ເກັບຂອງເສຍ. ໃນເວລາທີ່ລາວໃຊ້ບັນໄດປີນລົງໄປເອົາ, ລາວໄດ້ຮັບພິດຈາກແກັສໄຮໂດຣເຈັນຊັນໄຟດ໌

양돈농장 돼지우리(돈사)와 중간 집수조를 연결하는 배관이 막혀 이를 막대기로 뚫는 작업 중 막대기가 집수조 아래로 떨어지자 사다리로 내려가 주우려다 황화수소에 중독

### ສາເຫດຂອງອຸປະຕິເຫດ 재해발생 원인




- ການບໍ່ຮູ້ອັນຕະລາຍຈາກໄຮໂດຣເຈັນຊັນໄຟດ໌

  황화수소 위험성 인식 부족

  - (ຄຸນລັກສະນະ) ເປັນພິດສູງ ແລະ ກໍ່ໃຫ້ເກີດການເສຍຊີວິດໃນທັນທີ ຖ້າມີຄວາມເຂັ້ມຂຸ້ນເຖິງ 0.1~0.2% (ຄວາມເຂັ້ມຂຸ້ນສູງເຮັດໃຫ້ປະສາດດົມກິ່ນເປັນອຳມະພາດ → ບໍ່ສາມາດດົມກິ່ນໄດ້)

    (특성) 독성이 강해 농도가 0.1~0.2%에 이르면 즉사(고농도일 경우 후각 마비 → 냄새 못 느낌)

  - ກົນໄກການເກີດໄຮໂດຣເຈັນຊັນໄຟດ໌ໃນພື້ນທີ່ປິດ (ອົກຊີບໍ່ໄປລ້ຽງສະໝອງ ເພາະວ່າສານເຮັດໃຫ້ເລືອດໝົດຄວາມສາມາດລຳລຽງອົກຊີ ເຊິ່ງເຮັດໃຫ້ເສຍຊີວິດໃນທັນທີທັນໃດ)

    밀폐공간에서의 황화수소 발생기전(혈액의 산소 운반 기능을 뺏어 뇌에 산소 전달이 안 되어 즉사)

  ◈ໃນເວລາກວນພື້ນ (ຄາບ, ຕະກອນ ແລະ ອື່ນໆ) ຂອງອ່າງຕະກອນ ຫຼື ອ່າງນ້ຳ, ປະລິມານໄຮໂດຣເຈັນຊັນໄຟດ໌ທີ່ເກີດຂຶ້ນຈະເພີ່ມຂຶ້ນຢ່າງວ່ອງໄວ → ຈຳເປັນຕ້ອງມີການລະບາຍອາກາດຢ່າງຕໍ່ເນື່ອງໃນເວລາເຮັດວຽກ

  침전지·저류조 등의 바닥층(스컴, 퇴적물 등)을 휘저을 경우 황화수소 발생량 급속히 증가 → 작업 중 지속적 환기 필요

- ການບໍ່ນຳໃຊ້ໂປຣແກຣມການເຮັດວຽກໃນພື້ນທີ່ອັບອາກາດສຳລັບການເຮັດວຽກໃນພື້ນທີ່ປິດ

  밀폐공간 작업 시 밀폐공간 작업프로그램 미실시

### ຂັ້ນຕອນການເຮັດວຽກຢ່າງປອດໄພ 안전작업 방법




- (ຫ້າມການເຂົ້າ) ຫ້າມເຂົ້າສະຖານທີ່ໃດໜຶ່ງທີ່ມີຄວາມເປັນໄປໄດ້ສຳລັບການຂາດອາກາດຫາຍໃຈ

  (출입금지) 질식 위험장소 출입금지 조치
- (ການວັດແທກ) ວັດແທກຄວາມເຂັ້ມຂຸ້ນຂອງແກັສ(측정) 가스 농도 측정
- (ການລະບາຍອາກາດ) ເປີດພັດລົມລະບາຍອາກາດ (환기) 환기팬 가동
- (ໃສ່ອຸປະກອນປ້ອງກັນ) ຖ້າບໍ່ສາມາດລະບາຍອາກາດໄດ້, ໃຫ້ໃສ່ເຄື່ອງຊ່ວຍຫາຍໃຈ ຫຼື ໜ້າກາກແບບມີຖັງອາກາດໃນຕົວ

  (보호구 착용) 환기 불가능 시 공기호흡기 또는 송기마스크 착용

# ການໄດ້ຮັບພິດຈາກໄຮໂດຣເຈັນຊັນໄຟດ໌ ໃນລະຫວ່າງການເຮັດວຽກສ້ອມແປງບໍ່ເກັບຂອງເສຍ

집수조 수리작업 중 황화수소에 중독

## ໃນພື້ນທີ່ປິດ, ການລະບາຍອາກາດຢ່າງພຽງພໍແມ່ນສຳຄັນທີ່ສຸດ!

밀폐공간작업, 충분한 환기가 무엇보다 중요합니다!



# ເຮັດວຽກຢ່າງປອດໄພໃນເວລາໃຊ້ເຄື່ອງຕັດແຜ່ນແພ

## 섬유 재단기 사용 시 작업 안전

2018-교육미디어-365

### ⚠ ກໍລະນີເກີດອຸປະຕິເຫດ 재해사례



ໃນເວລາປ່ອນຜ້າໃສ່ຈັກຫຍິບໃນໂຮງງານຜະລິດແຜ່ນແພ, ແຂນຊ້າຍຂອງຜູ້ເຄາະຮ້າຍຖືກມ້ວນເຂົ້າກັນກັບຜ້າ ແລະ ຖືກລາກເຂົ້າໄປໃນຊ່ອງລະຫວ່າງລູກກິ້ງທີ່ໝຸນຢູ່ ແລະ ໂຕງລູກກິ້ງ

섬유제품제조 사업장 내에서 샤링기에 원단을 끼우는 작업 중 회전하는 샤링 롤러와 가이드 롤러 사이에 좌측 팔이 원단과 함께 말려 들어간 재해

### ເຄື່ອງຕັດແຜ່ນແພແມ່ນຫຍັງ? 섬유 재단기란?

ເຄື່ອງຕັດແຜ່ນແພແມ່ນເຄື່ອງຈັກທີ່ຕັດແຜ່ນໜັງ, ຜ້າຝ້າຍ, ເຈ້ຍແຂງ ແລະ ແຜ່ນປະເພດອື່ນໆ. ເຄື່ອງຕັດແຜ່ນແພແບບທຳມະດາຕັດແຜ່ນຕ່າງໆໂດຍການໝຸນ ເຊິ່ງເຮັດໃຫ້ເກີດສຽງດັງ, ຝຸ່ນໃຍຜ້າ ແລະ ອື່ນໆ.

섬유 재단기는 가죽, 면직물, 하드보드 및 기타 시트 등을 자르는 기계를 말한다. 일반적인 섬유 재단기는 커터를 회전시켜 시트를 절단하며, 소음, 섬유분진 등이 발생한다.

### ເຄື່ອງຕັດແຜ່ນແພ 섬유 재단기







OPEN 출처표시 공공누리 공공저작물 자유이용허락

## ອັນຕະລາຍ/ປັດໃຈສ່ຽງຕົ້ນຕໍ
주요 유해·위험 요인

- ເມື່ອຄົນງານພືຂອບແຜ່ນຜ້າທີ່ມີຮອຍຍັບ, ມີຄວາມສ່ຽງທີ່ມືຂອງລາວຈະຖືກຕັດໂດຍການສໍາຜັດກັບໃບມີດຂອງເຄື່ອງຕັດ.
  작업자가 주름이 잡힌 섬유의 가장자리를 펼 때 손이 재단기의 칼에 접촉에 의한 절단 위험
- ຄວາມສ່ຽງທີ່ສ່ວນຕ່າງໆຂອງຮ່າງກາຍຈະຖືກຕັດຫຼືບາດຈາກການສໍາຜັດກັບໃບມີດໃນລະຫວ່າງການປັບ ຫຼື ການສ້ອມແປງ
  조정이나 수리 중에 작업자가 칼에 접촉에 의한 절단 위험
- ຄວາມສ່ຽງທີ່ຄົນງານຈະຖືກຜັນ ແລະ ຖືກໜີບເຂົ້າໃນສ່ວນລະບົບສົ່ງກໍາລັງ ເຊັ່ນວ່າ ເກຍ, ສາຍພານ, ລູກລໍ້ ແລະ ອື່ນໆ.
  기어, 벨트, 풀리 등의 동력전달부에 작업자가 말림 및 끼임 위험
- ຄວາມສ່ຽງທີ່ຄົນງານຈະມື່ນນໍ້າມັນ, ຂີ້ຝຸ່ນ, ສໍາລີ ແລະ ອື່ນໆຢູ່ເທິງພື້ນອ້ອມເຄື່ອງຈັກ
  기계 주변 바닥에 기름, 분진, 보풀 등에 작업자가 미끄러짐 위험
- ຄວາມສ່ຽງເກີດໄຟໄໝ້ທີ່ເກີດການແຫຼ່ງລຸກຕິດໄຟເມື່ອສໍາລີ ຫຼື ນໍ້າມັນຖືກປະໄວ້ຢູ່ພາຍໃນເຄື່ອງຈັກ ຫຼື ບໍລິເວນພື້ນ
  보풀이나 기름이 기계 내부나 주변 바닥 등에 방치되어 있어 점화원에 의해 화재 발생 위험
- ຄວາມສ່ຽງເກີດການພົວພັນ ແລະ ຖືກຜັນເຂົ້າລະຫວ່າງລູກກິ້ງທີ່ກໍາລັງເຮັດວຽກ ເມື່ອຄົນງານຍືດປາຍແຜ່ນຜ້າ ຫຼື ເອົາພວກມັນເຂົ້າໃສ່ໃນເຄື່ອງຈັກ.
  작업자가 섬유의 가장자리를 펴거나 소재를 공급할 때 작동 중인 롤에 말림 및 끼임 위험

## ມາດຕະການຄວາມປອດໄພ
안전대책

- ຕິດຕັ້ງແນວປ້ອງກັນເພື່ອປ້ອງກັນບໍ່ໃຫ້ສໍາຜັດກັບຫົວຕັດ ແລະ ໃບມີດໂດຍການຮັບປະກັນໃຫ້ມີໄລຍະຫ່າງທີ່ຄົງທີ່ຈາກໃບມີຕັດ ແລະ ຕິດຕັ້ງອຸປະກອນອິນເຕີລັອກ.
  절단헤드와 칼날에 접촉하지 않도록 가드를 설치하며, 가드는 절단 칼날에서 일정한 거리를 유지하고, 연동장치를 설치한다
- ສາຍພານ, ຊຸດລູກລໍ້, ລະບົບເກຍ ແລະ ອຸປະກອນສົ່ງກໍາລັງອື່ນທັງໝົດທີ່ເປີດຕ້ອງມີແນວປົກກັ້ນພວກມັນ.
  모든 노출된 벨트, 풀리, 기어, 기타 동력전달장치들은 덮개를 부착해야 한다.
- ໃນເວລາແຜ່ພື້ນຜິວທີ່ພັບຂອງແຜ່ນແຜ, ມີຄວາມສ່ຽງທີ່ຈະຖືກດຶງເຂົ້າໃນລະຫວ່າລູກກິ້ງ ແລະ ສະນັ້ນ ຄວນໃຊ້ເຄື່ງມືສະເພາະ.
  접힌 면을 펼 때는 롤러에 말릴 위험이 있으므로 전용 수공구를 사용하여 작업을 한다.
- ໃຫ້ເຄື່ອງດູດຝຸ່ນເພື່ອທໍາຄວາມສະອາດຊ່ອງຫວ່າງໃນແນວກັ້ນ ແລະ ຕິດຕັ້ງລະບົບດູດຄວັນເພື່ອປ້ອງກັນການສະສົມຂອງຝຸ່ນຄວັນ.
  가드의 틈을 청소하기 위한 이동식 진공청소기를 비치하고, 보풀이 쌓이는 것을 방지하기 위해 배출시스템이 설치되어야 한다.
- ໃນເວລາໃຊ້ເຄື່ອງຕັດຫຼາຍອັນ, ບໍ່ຄວນອະນຸຍາດໃຫ້ໃຜເຂົ້າໄປຢູ່ຊ່ອງຫວ່າງລະຫວ່າງລາງ ຫຼື ຢູ່ຫຼັງຮົ້ວປ້ອງກັນຈົນກວ່າລູກກິ້ງຢຸດໝຸນແລ້ວ ແລະ ໄດ້ລັອກສະວິດປິດເປີດເຄື່ອງແລ້ວ
  다중절단기계가 사용될 때는 회전이 멈추고 스위치를 자물쇠로 잠글 때까지는 누구도 방책 뒤나 구획사이로 들어갈 수 없도록 조치하여야 한다.
- ຄົນງານຕ້ອງກວດກາຄວາມປອດໄພຂອງເຄື່ອງຈັກທຸກໆວັນ ແລະ ລາຍງານຫາຫົວໜ້າສາຍງານຂອງເຂົາເຈົ້າຖ້າຈໍາເປັນຕ້ອງມີການສ້ອມແປງຕ່າງໆ.
  작업자는 기계의 안전장치를 매일 점검하고, 수리가 필요하면 관리감독자에게 보고한다.

# ເຮັດວຽກຢ່າງປອດໄພໃນເວລາໃຊ້ເຄື່ອງຕັດເຈ້ຍ

종이재단기 사용 시 작업 안전

2018-교육미디어-366

## ⚠ ກໍລະນີເກີດອຸປະຕິເຫດ 재해사례



ຄວາມສ່ຽງທີ່ຈະບາດສ່ວນຕ່າງໆຂອງຮ່າງກາຍ ເຊັ່ນວ່າ ມືຂອງຄົນງານໃນຂະນະໃຊ້ເຄື່ອງຕັດເຈ້ຍ

종이재단기 작업 중 작업자 손 등의 신체부위 절단사고 발생 위험

## ອັນຕະລາຍ/ປັດໃຈສ່ຽງ

유해·위험 요인

- ຄວາມສ່ຽງທີ່ຈະຖືກຜັນເຂົ້າເຄື່ອງຈັກ ໃນຂະນະທີ່ປ້ອນວັດຖຸດິບ
  수동 원재료 투입 시 끼임 위험
- ຄວາມສ່ຽງທີ່ມືຈະຕິດຢູ່ພາຍໃນ ໃນເວລາເອົາສິ່ງເສດເຫຼືອທີ່ຕົກຄ້າງອອກ
  이물질 제거작업 시 손 끼임 위험
- ການສໍາຜັດກັບອັນຕະລາຍ ເຊັ່ນວ່າ ສຽງລົບກວນ ແລະ ຂີ້ຝຸ່ນ
  소음, 분진 등 유해 요인에 노출
- ຄວາມສ່ຽງທີ່ຈະທົນທຸກທໍລະມານຈາກຄວາມຜິດປົກກະຕິຂອງລະບົບກ້າມເນື້ອ ແລະ ກະດູກ ໃນຂະນະທີ່ຍົກຂົນວັດຖຸໜັກ
  중량물 취급 작업 시 근골격계 질환 발생 위험


OPEN 출처표시 공공누리 공공저작물 자유이용허락

# ມາດຕະການ ແລະ ວິທີປະຕິບັດດ້ານຄວາມປອດໄພໃນເວລາທີ່ຄວບຄຸມເຄື່ອງຕັດເຈ້ຍ

종이재단기 작업  안전대책 및 수칙

## ລາຍການກວດ

점검사항

- ດຳເນີນການກວດສອບດ້ານຄວາມປອດໄພຫຼັງຈາກປ່ຽນໃບມີດ
  전단날 교체 후 안전점검 실시
- ດຳເນີນການກວດສອບດ້ານຄວາມປອດໄພຫຼັງຈາກປ່ຽນໃບມີດ
  ດຳເນີນການກວດສອບປະຈຳວັນ ຫຼື ປະຈຳເດືອນໂດຍເຈົ້າໜ້າທີ່ທີ່ໄດ້ຮັບຝຶກອົບຮົມມາຢ່າງເໝາະສົມ.
  적절한 교육을 받은 직원을 통해 일일 또는 월간 점검 실시
- ດຳເນີນການກວດສອບດ້ານຄວາມປອດໄພຂອງທຸກຊິ້ນສ່ວນ (ເບກ, ຄາດ, ອິນເຕີລັອກ, ແລະອື່ນໆ.) ທຸກໆ 6 ເດືອນ
  6개월 단위 검사 시 모든 안전부품(브레이크, 클러치, 연동장치 등)에 대한 점검 실시
- ເມື່ອປ່ຽນໃບມີດ, ໃຫ້ເອົາໃຈໃສ່ໃນຂະນະໃສ່ ຫຼື ຖອດອຸປະກອນ ເຊັ່ນວ່າ ດ້າມມີດ ຫຼື ລາງເລື່ອນ
  전단날 교체 시 날 핸들 또는 슬라이드와 같은 장비의 탈부착 주의
- ກີດກັ້ນບໍ່ໃຫ້ຄົນງານຄົນອື່ນເຂົ້າໄປ ໂດຍການຕິດຕັ້ງຮົ້ວປ້ອງກັນ
  방호울타리 등을 사용하여 타 작업자 접근 차단

## ເຄັດລັບຄວາມປອດໄພ

안전수칙

- ກວດເບິ່ງອຸປະກອນປ້ອງກັນຄວາມປອດໄພ ແລະ ສະພາບການດຳເນີນງານຂອງແຕ່ລະຊິ້ນສ່ວນກ່ອນທີ່ຈະເລີ່ມເຮັດວຽກ
  작업시작 전 각부의 작동상태 및 안전장치 확인
- ເລີ່ມເຮັດວຽກຫຼັງຈາກທີ່ໝັ້ນໃຈແລ້ວວ່າຄວາມໜາຂອງວັດຖຸທີ່ຈະຕັດບໍ່ເກີນຂີດຈຳກັດຄວາມສາມາດຂອງເຄື່ອງຈັກ
  재단물의 두께가 기계능력 한계를 넘지 않도록 확인 후 작업
- ຫ້າມບໍ່ໃຫ້ຖອດຊິ້ນສ່ວນຂອງອຸປະກອນກ່ຽວກັບຄວາມປອດໄພ ເຊັ່ນວ່າ ຊຸດປ້ອງກັນຄວາມປອດໄພໃນຊິ້ນສ່ວນທີ່ຈະຕັດ
  절단부의 안전가드 등 안전장치 임의 해체 금지
- ຕິດຝາຄອບເທິງແປ້ນຢຽບ ເພື່ອປ້ອງກັນການດຳເນີນງານຜິດພາດຂອງເຄື່ອງຕັດ
  재단기의 불시작동 방지를 위해 풋스위치 보호덮개 부착



ອຸປະກອນປ້ອງກັນອີເລັກໂທຣນິກແສງ
광전자식 안전장치

ແປ້ນຢຽບ
풋 스위치



ຝາຄອບແປ້ນຢຽບ
풋 스위치 보호덮개

# ຄວາມປອດໄພໃນການເຮັດວຽກ ໃນເວລາໃຊ້ເຄື່ອງເຊາະໄມ້ແບບໃຊ້ມືປ້ອນ
동력식 수동대패 사용 시 작업 안전

2018-교육미디어-367

## ⚠ ກໍລະນີເກີດອຸປະຕິເຫດ 재해사례



• ໃນຂະນະທີ່ໃສ່ແຜ່ນໄມ້ (1,750 ມມ × 210 ມມ × 30 ມມ) ລົງໃນເຄື່ອງເຊາະໄມ້ເພື່ອປັບພື້ນຜິວຂອງໄມ້ໃຫ້ລຽບ, ໄມ້ກະເດັນໄປໃນທິດທາງກົງກັນຂ້າມ ແລະ ຟາດເຂົ້າທີ່ໜ້າທ້ອງຂອງຜູ້ເຄາະຮ້າຍ ເຊິ່ງກໍ່ໃຫ້ເກີດການເສຍຊີວິດຈາກການສີກຂາດຂອງລຳໄສ້.

표면 가공을 위하여 목재(1,750㎜×210㎜×30㎜)를 동력식 수동대패기에 투입하던 중 대패기에서 가공 중에 투입 반대방향으로 목재 반발, 튀어나온 목재에 복부를 맞아 장파열로 사망

## ເຄື່ອງເຊາະໄມ້ແບບໃຊ້ມືປ້ອນແມ່ນຫຍັງ? 동력식 수동대패란?

• ເຄື່ອງປັບພື້ນຜິວຂອງໄມ້ ຫຼື ວັດສະດຸທີ່ຄ້າຍກັບໄມ້ໃຫ້ລຽບ ໂດຍການໃຊ້ບລັອກມີດແບບໝຸນ ເຊິ່ງຈະຖືກຕິດຕັ້ງແບບທາງນອນໄວ້ລະຫວ່າງໂຕະສອງໜ່ວຍທີ່ຮອງຮັບຊິ້ນສ່ວນວຽກ.

가공물을 고정시키는 두 개의 테이블 사이에 수평으로 설치되어 회전하는 커터블록(cutter block)을 이용하여 목재 또는 이와 유사한 재질의 표면을 매끄럽게 깎아서 가공하는 기계를 말한다.

※ບລັອກມີດໝາຍເຖິງແທ່ງຮູບຊົງກະບັ້ງທີ່ຍຶດຕິດໃບມີດ, ແລະ
ເປັນສ່ວນປະກອບໜຶ່ງຂອງເຄື່ອງເຊາະໄມ້ແບບໃຊ້ມືປ້ອນ ເຊິ່ງຈະປາດພື້ນຜິວຂອງວັດສະດຸໄມ້ດ້ວຍການໝຸນ.

※1커터블록(Cutter block)은 절삭날을 고정시키는 원통형의 기둥을 말하며 이를 회전시켜서 가공재의 표면을 절삭하는 동력식 수동대패의 부품을 말한다.

## ອັນຕະລາຍ/ປັດໃຈສ່ຽງຕົ້ນຕໍ
주요 유해·위험 요인

- ຄວາມສ່ຽງທີ່ຈະຖືກບາດ/ຕັດຍ້ອນຖືກໃບເລື່ອຍ

  톱날 접촉 등에 의한 베임·절단 위험
- ຄວາມສ່ຽງທີ່ຈະຖືກຟາດໂດຍໄມ້ທີ່ກະເດັນມາຈາກການເຂົ້າໄປຂັດຂວາງລະຫວ່າງໄມ້ ແລະ ໃບເລື່ອຍ

  목재와 톱날의 간섭으로 인해 반발하는 목재에 의해 맞음 위험
- ຄວາມສ່ຽງທີ່ຈະເກີດອັນຕະລາຍຕໍ່ສຸຂະພາບ ເນື່ອງຈາກການສູບດົມເອົາຝຸ່ນໄມ້ເຂົ້າໄປ

  목분진 흡입에 의한 건강장해 위험
- ຄວາມສ່ຽງທີ່ຈະເກີດຄວາມຜິດປົກກະຕິຂອງລະບົບກະດູກ ແລະ ກ້າມເນື້ອ ເຊິ່ງເປັນຜົນມາຈາກທ່າທາງການເຮັດວຽກທີ່ບໍ່ຖືກຕ້ອງ, ແລະອື່ນໆ.

  부적절한 근로자세 등에 의한 근골격계질환 위험

고용노동부 산업재해예방 안전보건공단

OPEN 출처표시 공공누리 공공저작물 자유이용허락

LAOS

## ມາດຕະການຄວາມປອດໄພ
안전대책

- ເມື່ອຈະຕັດຊິ້ນສ່ວນໄມ້ທີ່ບາງ ແລະ ສັ້ນດ້ວຍເຄື່ອງເຊາະໄມ້ແບບໃຊ້ມືປ້ອນ,ໃຫ້ໃຊ້ເຄື່ອງຈັກທີ່ສາມາດກົດໄມ້ໄວ້ໄດ້.
  수동 대패기계로 얇고 짧은 목재를 깎을 때는 목재를 누를 수 있는 치구를 사용한다.
- ເມື່ອຈະປັບລຽບຜິວໄມ້ທີ່ສັ້ນກວ່າໄລຍະຂອງລູກກິ້ງດ້ານໜ້າ ແລະ ດ້ານຫຼັງໃນເຄື່ອງເຊາະໄມ້ອັດຕະໂນມັດແບບຊັ້ນດຽວ, ໃຫ້ສອດໄມ້ເຂົ້າໃນເຄື່ອງຈັກແບບກ່ອງ.
  자동일면 대패기계에서 가공재료가 전후 롤러의 간격보다 짧은 목재를 가공할 때에는 상자형의 치구에 넣어서 가공하도록 한다.
- ຕິດຕັ້ງຝາຄອບປ້ອງກັນໃບມີດ ເຊິ່ງຈະປົກໃບມີດເຊາະໄມ້ໄວ້ຢູ່ຕະຫຼອດ, ແລະ ກວດສອບໃຫ້ແນ່ໃຈວ່າຝາຄອບນັ້ນອະນຸຍາດໃຫ້ຊິ້ນສ່ວນວຽກຜ່ານໄປໄດ້ຢ່າງອິດສະຫຼະ.
  대패날을 항상 덮을 수 있는 날접촉예방장치를 설치하며 덮개는 공작물을 자유롭게 통과시킬 수 있도록 한다.

## ປະເພດຂອງຝາຄອບປ້ອງກັນໃບມີດ 날접촉예방장치의 종류

- ຝາຄອບປ້ອງກັນໃບມີດແບ່ງອອກເປັນແບບເຄື່ອນທີ່ໄດ້ ແລະ ແບບຕາຍຕົວ, ເຊິ່ງຂຶ້ນກັບວິທີການດຳເນີນງານ
  대패기계의 날접촉예방장치는 운전방식에 따라 가동식과 고정식으로 구분한다.
- ຝາຄອບ ແບບ ເຄື່ອນທີ່ໄດ້ຊ່ວຍໃຫ້ສາມາດປັບຄົມມີດໄດ້ຕາມຂະໜາດຂອງທ່ອນໄມ້, ແລະ ປ້ອງກັນຮ່າງກາຍຂອງມະນຸດບໍ່ໃຫ້ຖືກມີດ.
  가동식 덮개는 대패날 부위를 가공재료의 크기에 따라 움직이며 인체가 날에 접촉하는 것을 방지해 주는 형식이다.
- ຝາຄອບແບບຕາຍຕົວຊ່ວຍໃຫ້ສາມາດໃຊ້ມືປັບຄົມມີດໄດ້ຕາມຈຳເປັນ
  고정식 덮개는 대패날 부위를 필요에 따라 수동 조정하도록 하는 형식이다.

### ຝາຄອບປ້ອງກັນໃບມີດແບບເຄື່ອນທີ່ໄດ້
가동식 접촉 예방장치




### ຝາຄອບປ້ອງກັນໃບມີດແບບເຄື່ອນທີ່ໄດ້
가동식 접촉 예방장치




### ໄລຍະຫ່າງລະຫວ່າງຝາຄອບ ແລະ ໂຕະ
덮개와 테이블의 간격




### ຝາຄອບປ້ອງກັນໃບມີດແບບຕາຍຕົວ
고정식 접촉 예방장치

